Montreal, Qc, Canada,   April 12, 2005

**ສະບາຍດີ**

ບັນດາທ່ານອະດີດ ຜູ້ອຳນວຍການ, ຄຣູ ອາຈານ ແລະ ນ້ອງໆ ນັກຮຽນ-ນັກສຶກສາ ຈາກ ວິທຍາລັຍຄຣູສວັນນະເຂດ(ຫຼັກກ) ທຸກທ່ານ,

ການພົບພໍ້ຄັ້ງປວັດສາດຂອງພວກເຮົາຢູ່ທີ່ Gilbert, Az,USA , ຫາກໍ່ຜ່ານມາ ໄດ້ ໑໐ ວັນພໍດີໃນມື້ນີ້. ຕໍ່ເຫດການອັນສຳຄັນດັ່ງກ່າວ **ຂ້າພະເຈົ້າ ຂໍ** :

໑- **ຂອບໃຈ** ມາຍັງຄອບຄົວພວກນ້ອງ **ທົງສວັດ-ຂັນເງິນ ວິລະວັນ** ແລະເຄືອຍາຕ ທີ່ໄດ້ໃຫ້ການຕ້ອນຮັບຢ່າງເປັນກັນເອັງ ອຳນວຍຄວາມສະດວກແລະຖຸ້ມເທທຸກສິ່ງຢ່າງ ໃນຖານະເປັນເຈົ້າສະຖານທີ່ ຫລື ເຈົ້າພາບທ່ອງຖິ່ນ ເພື່ອໃຫ້ງານສຳເຣັດໄປດ້ວຍ ຄວາມຈົບງາມ, **ຂອບໃຈ** ນ້ອງ ໜູ ນີຣະວັນ ນັກປະພັນ ນັກກະວີ ຜູ້ປະສານງານດີເດັ່ນ ແລະ Webmaster ທັງເປັນເປັນຫົວເຮືອໃຫຍ່(Captain)ຂອງທີມງານກະກຽມ ຊຶ່ງ ປະກອບມີ ຂັນເງິນ, ສີພັນດອນ ສີດາວົງ ນັກປະຊາສຳພັນ ທັງເປັນນັກກະວີ ທີ່ພວມພຸ່ງພົ້ນມາຢ່າງແຮງ, ອາຈານ ແພສເຕີ ອິນທະຫວາ ອິນທິສານ ພ້ອມພັລຍາ ທີ່ ຊ່ວຍທັງສະຕິປັນຍາແລະເຮື່ອແຮງ ເຮັດໃຫ້ງານມີຄວາມໝາຍເລີກເຊິ່ງເກີນຄາດ. **ຂອບໃຈ** ນຳບັນດາ "ນ້ອງລ້ຽງ" ຊຶ່ງມີ ນ້ອງ ບຸນຮົ່ມ ຈັນທະຄູນ(ຫົວໜ້າ), ນ້ອງ ໂສດາ ຂັນຕິວົງ, ນ້ອງ ຄຳພອນ ພັນທະມະນີ, ນ້ອງ ຍົມມະລາ ເກຕຕະວົງ ແລະ ອີກຫລາຍໆຄົນ... ອາຫານແຊບຊ້ອຍ ລາບກ້ອຍຊອຍໜັງອ່ອນ..ອອນຊອນເດ..ຢາກກິນອີກເດ...**ຂອບໃຈ** ນ້ອງຄຳມີ ສຸຣິວົງ ທີ່ມີພລັງແຮງຊ່ວຍດ້ານເຄື່ອງດື່ມ ພິເສດ ອິດສາແບກເອົາແຄນແລະຄຸ່ຍ ຈາກ ຄາລີຟໍເນັຍ ມາເປັນຂອງຕ້ອນທີຣະລຶກ ແກ່ຂ້າພະເຈົ້າ. ຂອບໃຈ ນ້ອງໆອະດີດຊາວ ຫລັກກ ພ້ອມຄອບຄົວ ແລະ ເພື່ອນມິຕພາຍນອກ ທີ່ໃຫ້ຄວາມນັບຖື ຮັກແພງ ແລະ ຄວາມລິ້ງແກ່ນ...**ຂອບໃຈຫລາຍໆນຳໝົດທຸກໆຄົນເນີ.**

໘- **ຍິນດີນຳ** ທີ່ ພວກນ້ອງໆ ມີ ແນວຄິດສ້າງສັນ ສ້າງໂອກາດ ສ້າງເງື່ອນໄຂ ໃຫ້ພວກເຮົາໄດ້ພົບພໍ້ກັນ ຮູ້ຈັກຮັກແກ່ນກັນຄືນໃໝ່. **ຍິນດີນຳ** ບົດປາສັຍຂອງ ອາຈານເງິນແທ່ງ ເກຕຕະວົງ ອະດີດຜູ້ອຳນວຍການ ຊຶ່ງເຕັມດ້ວຍຄວາມຈິງໃຈ ເນື້ອໃນ ແລະສາຣະອັນເປັນຕາຟັງແລະໜ້າຮ່ຳຮຽນເອົາ ຕລອດຮອດກິຣິຍາ ທ່າທາງ ຂອງເພິ່ນກໍເປັນຕົວຢ່າງອັນດີງາມແກ່ນ້ອງໆແລະປວງຊົນທີ່ພົບເຫັນ. **ຍິນດີນຳ**ທີ່ເຫັນບັນດານ້ອງໆສ່ວນໃຫຍທີ່ປະພຶດຕົນສົມກັບເຄີຍເປັນຜູ້ຮຽນຮູ້ ເຄີຍເປັນພໍ່ພິມແມ່ພິມຂອງຊາດມາແລ້ວ. **ຍິນດີນຳ** ທີ່ງານຂອງພວກເຮົາມີຄວາມໝາຍເລິກເຊິ່ງ ແລະເຕັມດ້ວຍໄມຕຣີຈິຕ ມິຕພາບຖານອ້າຍ-ນ້ອງ ທີ່ເຄີຍຮ່ວມສຸຂ ຮ່ວມທຸກນຳກັນ ເຄີຍກິນເຂົ້າຮ່ວມພາ ກິນປາຮ່ວມຖ້ວຍກິນກ້ວຍຮ່ວມຫວີ(ບໍ່ຫິວ) ນຳກັນມາແລ້ວ. **ດີໃຈນຳ**ທີ່ທຸກຄົນກັບເຖິງຖິ່ນຖານຂອງຕົນດ້ວຍຄວາມປອດພັຍ ແລະ ຍັງເກັບກຳເອົາຈິຕໃຈ (Spirit) ຂອງງານຄັ້ງນີ້ໄວ້ເຫິງນານເພື່ອນຳໄປເສີມຂຍາຍໃຫ້ເປັນປະເພນີອັນດີງາມຕໍ່ໄປ. **ຍິນດີສເມີ ທີ່ຈະໄປຮ່ວມນຳຄັ້ງໃໝ່.**

໙- **ພູມໃຈ** ທີ່ໄດ້ຊາບວ່າ ຊາວອະດີດວິທຍາລັຍຄຣູສວັນນະເຂດ ຫລາຍທ່ານມີບົດບາດເປັນຜູ້ນຳ(Leadership) ແລະການພົວພັນໃນທາງເສີມສ້າງຕໍ່ສັງຄົມທີ່ຕົນເອງສັງກັດຢູ່. **ພູມໃຈ** ທີ່ຊາບຂ່າວວ່າອະດີດຫລັກເຈັດ ຫລາຍຄົນສາມາດສຶກສາຕໍ່ຊັ້ນສູງ ຈົບຈົບຫລາຍຂັ້ນ ຫລາຍປະຣິນຍາ ຫລາຍຂແນງວິຊາ . **ພູມໃຈ** ທີ່ຍິນຂ່າວວ່າຊາວຫລັກເຈັດໃນເມື່ອກ່ອນທັງພາຍໃນແລະນອກປະເທດ ມີຫລາຍຄົນທີ່ປະສົບຜົນສຳເຣັດໃນພາລະໜ້າທີ່ວຽກງານຕາມຂແນງວິຊາອາຊີບອັນເປັນທັມຕ່າງໆ. ພວກເພິ່ນເຫລົ່ານັ້ນແຫລະ ທີ່ສ້າງຄວາມທະນົງກຽດ ແລະນຳສັກສີມາສູ່ສັງຄົມຊາວອະດີດວິທຍາລັຍຄຣູສວັນນະເຂດ ທັງຄຣູ ອາຈານ ແລະສິດ ຂອງພວກເຮົາທຸກຄົນ !.

**ພູມໃຈຫລາຍ ທີ່ໄດ້ຍິນຂ່າວດີໆເຊັ່ນນີ້.**

໑໐- **ດີໃຈນຳ** ທີ່ຫລາຍຄົນໄດ້ມີໂອກາດກັບຕ່າວເມືອຢາມບ້ານເກີດ ແລະໄດ້ແວະຢາມສະຖາບັນ ວິທຍາລັຍຄຣູສວັນນະເຂດ ແລະເພື່ອນຮ່ວມຊັ້ນ ຮ່ວມຫ້ອງ ຮ່ວມວຽກງານ

ໃນເມື່ອກ່ອນ.

**ດີໃຈນຳທີ່** ສະຖາບັນດັ່ງກ່າວຍັງເປັນບ່ອນລໍ່ຫລອມພໍ່ພິມແມ່ພິມຂອງຊາດ ແລະຖ່າຍທອດຄວາມຮູ້ ນາໆວິຊາການແກ່ອານຸຊົນຮຸ່ນຕໍ່ໆໄປ. **ດີໃຈຕໍ່**ການສ້າງສາພັທນາທາງອາຄານສະຖານທີ່ ແລະການຍົກຣະດັບດ້ານວິຊາການ ວິຊາສະເພາະຂອງບັນດາພາລະກອນສິດສອນ(ຄນະນຳ ແລະ ຄຣູ ອາຈານ)

**ດີໃຈນຳ** ທີ່ ວິທຍາລັຍຄຣູສວັນນະເຂດແຫ່ງນັ້ນເຄີຍຮັບກຽດເປັນສະຖາບັນທີ່ໜຶ່ງຕິດຕໍ່ກັນຫລາຍປີໃນບັນດາວິທຍາລັຍຄຣູອື່ນໆທົ່ວປະເທດລາວ.

**ດີໃຈນຳ** ແລະ **ຂອບໃຈ** ຜູ້ທີ່ບໍຣິຈາກ ແລະ ກຳລັງຈະບໍຣິຈາກປັດໃຈສົມທົບ **ກອງທຶນ** ເພື່ອໄປຊື້ອຸປະກອນເຄື່ອງໃຊ້ດ້ານເອເລັກໂຕຣນິກ-ຄອມພິວເຕີ ຫລື ຈັກພິມ ຈຳນວນໃດໜຶ່ງ ເພື່ອມອບເປັນຂອງຂວັນທີ່ຣະລຶກ ແກ່ ວິທຍາລັຍຄຣູສວັນນະເຂດ ຈາກ ພວກເຮົາຊາວອະດີດຈາກສະຖາບັນດັ່ງກ່າວທີ່ຢູ່ຕ່າງແດນ.ທ່ານສາມາດສົ່ງ Cheque ຫລື Money Order ໄປຫາ ອາຈານ ແກ້ວຕາ ພົມມະຣິນ ໄດ້ດັ່ງນີ້:

Keota PHOMMARINH
710, Joliette
Longueuil, Qc J4K 4V5
Canada

ຈຳນວນເງິນ ພ້ອມລາຍຊື່ຜູ້ບໍຣິຈາກ (ຫາກທ່ານບໍ່ຂັດຂ້ອງ) ຈະແຈ້ງອອກທາງ E-mail ຫລື Website : WWW.Angelfire.com/folks/ecole_normale_sv

໔- **ສເນີ** ຂໍ້ຄິດເຫັນວ່າ ການພົບພໍ້ກັນຄັ້ງໜ້າ ຄວນຈັດຂຶ້ນໃນປີ ໒໐໐໗ ໃນທ້ອງເດືອນ ກໍຣະກະດາ(໗) ຫາ ເດືອນ ສິງຫາ(໘).ສະຖານທີ່ຈັດ ຄວນຈະໃຫ້ເປັນພາກຕາເວັນອອກ Eastern cost ຂອງສະຫະຣັຖ ຫລື ເຂດ ອ້ອມແອ້ມນະຄອນToronto,Ontario. Canada ກໍໄດ້.

<u>**ຮູບການຈັດ**</u>: ສະຖານທີ່ ຄວນເປັນບ່ອນພັກເຊົ່າຮວມສູນ (ແທນທີ່ຈະເປັນໂຮງແຮມ) ເຊັ່ນ **ສະຖານທີ່ພັກຮ້ອນ**(Vacations Camp) ຊຶ່ງມີທໍພັກ ເຮືອນພັກ ບ່ອນກາງນອນ camping ອາຄານເອື້ອອຳນວຍຄວາມສະດວກຕ່າງໆອັນຈຳເປັນ ຫ້ອງສະໂມສອນ ເດີ່ນກິລາ ບ່ອນຈອດຣົຖ ເປັນຕົ້ນ, ບໍ່ຄວນ ໄກຈາກສະຖານທີ່ທ່ອງທ່ຽວແລະບໍ່ໄກສນາມບິນເກີນໄປ. ການພົບພໍ້ກັນ ຄວນຢູ່ໃນຂອບເຂດ ໓ ຫາ ໕ ມື້ ຫລື ໑ ອາທິດ (ຂຶ້ນກັບຄ່າເຊົ່າ). ການເຊົ່າຣົຖບັສໂຮງຮຽນ ສຳຣັບໄປທ່ອງທ່ຽວຮວມໝູ່ ຣາຄາອາດຈະຖືກກວ່າຣົຖບັສທຳມະດາ.

<u>**ເນື້ອໃນ**</u> : ຄວນເຮັດແນວໃດໃຫ້ມີບັນຍາກາດມ່ວນຊື່ນທີ່ສຸດ,(ຄັ້ງກ່ອນກໍມ່ວນຢູ່ແລ້ວ) ໃຫ້ມີໂອກາດໄດ້ ແລກປ່ຽນປະສົບການ ຮ່ຳຮຽນນຳຜູ້ມີປັນຍາອາວຸໂສ ສົນທະນາປາສັຍບັນຫາທີ່ຈະເປັນປໂຍດ ຕໍ່ຕົນ ຄອບຄົວ ແລະຕໍ່ສັງຄົມ...ເປັນຕົ້ນ. ທັງໝົດນີ້ ໃຫ້ຢູ່ໃນບັນຍາກາດທີ່ເບົາສມອງ ບໍ່ຊຶງຄຽດ ມ່ວນຊື່ນເຮຮາ ຟ້າລັ່ນ ນຳກັນ ທັງຜູ້ເວົ້າແລະຜູ້ຟັງ.

**ທ້າຍສຸດ** ຂໍອວຍພອນໃຫ້ທຸກທ່ານ ຈົ່ງມີສຸຂພາບແຂງແຮງ ມີໂຊກລາພ ແລະມີຜົລສຳເຣັດໃນສິ່ງທີ່ປາຖນາອັນຊອບທັມດ້ວຍເທີ້ນ.

ໂຊກດີປີໃໝ່ລາວ ປີໄກ່ ພ.ສ. ໒໕໕໗ ແດ່ ທຸກຄົນ

ນັບຖື ແລະ ຮັກແພງ ຈາກ

ວັນພິລາ ສ.ຜາບມີໄຊຍ໌ **Vanphila S.PHABMIXAY**
**1935, Brabant**
**Laval, Qc H7M 3K6 Cana**
**Tel.514 928 2422**
**Vanphila@rlcol.com or Vanphila@financier.com**

**P.S.** ຝາກຮູບທີ່ມີຄວາມໝາຍສຳຣັບຄຣູມາໃຫ້ຄິດເບົາສມອງນ້ອຍໜຶ່ງ



ໜ້າທີ່ ບົດບາດ ຂອງ ແມ່ພິມ ພໍ່ພິມຂອງຊາດ

ຫລື ແມ່ ຜູ້ມີພຣະຄຸນ